ເງິນຊ່ວຍເຫຼືອ CALFRESH
ວິທີລາຍງານການປຽນແປງຕ່າງໆຂອງຄອບຄົວ

ທຸກຄົນຜູ້ທີ່ໄດ້ຮັບເງິນຊ່ວຍເຫຼືອ CalFresh (ເມື່ອກ່ອນແມ່ນໂຄງການບັດຊື້ອາຫານ) ຕ້ອງລາຍງານ ເມື່ອລາຍໄດ້ ຫຼືສະຖານະການໃນຄອບຄົວຂອງເຂົາເຈົ້າມີປຽນແປງ. ຖ້າທ່ານບໍ່ແນ່ໃຈວ່າຈະລາຍງານການປຽນແປງແນວໃດ, ຈະລາຍງານການປຽນແປງອັນໃດ, ຫຼືພວກເຮົາຕ້ອງການຫຼັກຖານອັນໃດ, ໃຫ້ທ່ານຖາມກັບພະນັກງານຂອງທ່ານ. ທ່ານໄດ້ຮັບແຈ້ງການນີ້ ເພາະວ່າ:

☐ ທ່ານໄດ້ຮັບອະນຸມັດໃຫ້ໄດ້ຮັບເງິນຊ່ວຍເຫຼືອ CalFresh ແລະຈະລາຍງານການປຽນແປງຕ່າງໆບົນພື້ນຖານການລາຍງານການປຽນແປງ.

☐ ຜ່ານມານັ້ນ ຄອບຄົວຂອງທ່ານໄດ້ຮັບການກຳນົດໃຫ້ມີສະຖານະການລາຍງານເປັນໄລຍະເຄິ່ງປີ ແລະ<u>ດຽວນີ້</u> ແມ່ນຈະຕ້ອງລາຍງານບົນພື້ນຖານການປຽນແປງ.

ເງື່ອນໄຂກຳນົດການລາຍງານການປຽນແປງແມ່ນໄດ້ອະທິບາຍໄວ້ຢູ່ລຸ່ມນີ້.

ການລາຍງານການປຽນແປງ

ທ່ານ**ຕ້ອງ**ລາຍງານການປຽນແປງຕໍ່ໄປນີ້ພາຍໃນສິບວັນຄື:

- ຖ້າຄອບຄົວຂອງທ່ານມີການປຽນແປງທາງດ້ານແຫຼ່ງລາຍໄດ້ທີ່ຫາໄດ້ປະຈຳເດືອນ, ຫຼືລາຍໄດ້ທີ່ຫາໄດ້ປະຈຳເດືອນຂອງຄອບຄົວທ່ານເລີ່ມມີຂຶ້ນ, ຢຸດໄປ, ຫຼືມີການປຽນແປງຫຼາຍກວ່າ $100.00.
- ຖ້າຄອບຄົວຂອງທ່ານມີການປຽນແປງທາງດ້ານແຫຼ່ງລາຍໄດ້ທີ່ຫາໄດ້ປະຈຳເດືອນ, ຫຼືລາຍໄດ້ປະຈຳເດືອນຂອງຄອບຄົວທີ່ໄດ້ມາໂດຍບໍ່ໄດ້ຫາທ່ານເລີ່ມມີຂຶ້ນ, ຢຸດໄປ, ຫຼືມີການປຽນແປງຫຼາຍກວ່າ $50.00.
- ແຫຼ່ງລາຍໄດ້ຂອງຜູ້ໃດຜູ້ໜຶ່ງປຽນແປງ.
- ທ່ານຍ້າຍເຂົ້າມາຢູ່ພ້ອມກັບຜູ້ອື່ນ ຫຼືມີຄົນຍ້າຍເຂົ້າມາ ຫຼືອອກຈາກເຮືອນຂອງທ່ານ, ລວມທັງເດັກນ້ອຍເກີດໃໝ່, ເດັກນ້ອຍອື່ນໆ, ພີ່ວ/ເມຍ, ຍາດພີ່ນ້ອງ ຫຼືຜູ້ທີ່ບໍ່ເປັນພີ່ນ້ອງອື່ນໆ.
- ຜູ້ໃດຜູ້ໜຶ່ງທີ່ຍ້າຍໄປຢູ່ທີ່ຢູ່ໃໝ່, ມີແຜນຍ້າຍອອກໄປ ຫຼືມີທີ່ຢູ່ທາງໄປສະນີໃໝ່.
- ເງິນສົດ, ຫຼັກຊັບ, ພັນທະບັດ ຫຼືເງິນອື່ນໆທັງໝົດຂອງຄອບຄົວຂອງທ່ານມີຫຼາຍກວ່າ $2250 (ຫຼື $3250 ຖ້າມີບາງຄົນຢູ່ໃນຄອບຄົວຂອງທ່ານມີອາຍຸ 60 ປີ ຫຼືແກ່ກວ່ານັ້ນ ຫຼືພິການ).
- ຖ້າມີການປຽນແປງຢູ່ໃນຈຳນວນເງິນຊ່ວຍລ້ຽງລູກທີ່ສານສັ່ງໃຫ້ຈ່າຍ ທີ່ສະມາຊິກຄອບຄົວໄດ້ຈ່າຍໃຫ້ກັບເດັກນ້ອຍທີ່ບໍ່ຢູ່ໃນເຮືອນ.
- ຖ້າທ່ານມີເງື່ອນໄຂຕາມກົດລະບຽບການເຮັດວຽກຂອງຜູ້ໃຫຍ່ທີ່ມີຮ່າງກາຍປົກກະຕິໂດຍບໍ່ມີຜູ້ຂຶ້ນກັບ (ABAWD) ໂດຍການເຮັດວຽກ ແລະຊົ່ວໂມງເຮັດວຽກຂອງທ່ານຕົກລົງຕ່ຳກວ່າ 20 ຊົ່ວໂມງຕໍ່ອາທິດ ຫຼື 80 ຊົ່ວໂມງຕໍ່ເດືອນ. ກົດລະບຽບ CalFresh ຈຳກັດການໄດ້ຮັບເງິນຊ່ວຍເຫຼືອ CalFresh ໄດ້ເຖິງ 3 ເດືອນໃນໄລຍະ 3 ປີ ສຳລັບຜູ້ທີ່ເປັນ ABAWD ເຊິ່ງເປັນຜູ້ທີ່ບໍ່ໄດ້ເຮັດວຽກ ຫຼືບໍ່ໄດ້ເຂົ້າຮ່ວມໃນກິດຈະກຳທີ່ອະນຸຍາດໃຫ້ອື່ນໆ. ທ່ານໄດ້ຮັບການຍົກເວັ້ນຈາກກົດລະບຽບການເຮັດວຽກຂອງ ABAWD ແລະບໍ່ຈຳເປັນຕ້ອງລາຍງານເລື່ອງການຫຼຸດຊົ່ວໂມງເຮັດວຽກຂອງທ່ານລົງ ຖ້າທ່ານ:
  - ອາໄສຢູ່ໃນຄາວຕີ້ບ່ອນທີ່ກົດລະບຽບການເຮັດວຽກຂອງ ABAWD ຖືກເປັນໂມຄະ ເນື່ອງຈາກອັດຕາການຫວ່າງງານສູງ;
  - ມີອາຍຸຕ່ຳກວ່າ 18 ປີ ຫຼືມີອາຍຸ 50 ປີ ຫຼືແກ່ກວ່າ;
  - ໄດ້ຮັບການຢັ້ງຢືນທາງການແພດວ່າບໍ່ມີຄວາມຟິດທາງດ້ານຮ່າງກາຍ ຫຼືຈິດໃຈສຳລັບການຈ້າງງານ'
  - ບັນລຸໄດ້ຕາມກົດລະບຽບ Welfare-To-Work (ສະຫວັດດີການເພື່ອວຽກ) ຂອງ CalWORKs (ໂຄງການໃຫ້ໂອກາດ ແລະຄວາມຮັບຜິດຊອບການເຮັດວຽກສຳລັບເດັກລັດຄາລິຟໍເນຍ)
  - ກຳລັງດູແລຄົນທີ່ໄດ້ຮັບບາດເຈັບ ຫຼືຄົນປ່ວຍ ຜູ້ທີ່ຕ້ອງການຄວາມຊ່ວຍເຫຼືອຫຼາຍກວ່າ 30 ວັນ;
  - ກຳລັງເຂົ້າຮ່ວມໃນໂຄງການບຳບັດການຕິດເຫຼົ້າ ຫຼືຢາ ທີ່ເຮັດໃຫ້ທ່ານບໍ່ໄດ້ເຮັດວຽກ 30 ຊົ່ວໂມງ ຫຼືຫຼາຍກວ່ານັ້ນຕໍ່ອາທິດ;
  - ກຳລັງໄດ້ຮັບ ຫຼືໄດ້ຂໍເງິນຊ່ວຍເຫຼືອປະກັນໄພການຫວ່າງງານແລ້ວ;
  - ໄດ້ເຮັດວຽກ ຫຼືເຮັດທຸລະກິດສ່ວນຕົວຢາງໜ້ອຍ 30 ຊົ່ວໂມງຕໍ່ອາທິດ ຫຼືກຳລັງມີລາຍໄດ້ທີ່ຫາມາປະຈຳອາທິດຢາງໜ້ອຍເທົ່າກັບຄ່າຈ້າງຕ່ຳສຸດຂອງລັດຖະບານກາງຄູນໃຫ້ 30 ຊົ່ວໂມງ;
  - ໄປເຂົ້າໂຮງຮຽນຢາງໜ້ອຍເຄິ່ງເວລາ;
  - ຖືພາ; ຫຼື
  - ຢູ່ໃນຄອບຄົວ CalFresh ທີ່ມີເດັກນ້ອຍທີ່ບໍ່ທັນພົ້ນກະສຽນອາຍຸ ແມ້ແຕ່ວ່າເດັກນ້ອຍທີ່ບໍ່ທັນພົ້ນກະສຽນອາຍຸນັ້ນບໍ່ມີສິດໄດ້ຮັບເງິນຊ່ວຍເຫຼືອ CalFresh ກໍ່ຕາມ.

ທ່ານ**ອາດ**ຕ້ອງລາຍງານ ເມື່ອ:

- ຄວາມເຈັບປວດທາງຮ່າງກາຍ ຫຼືຈິດໃຈຂອງຜູ້ໃດຜູ້ໜຶ່ງເລີ່ມເກີດຂຶ້ນ ຫຼືໝົດໄປ.
- ສະຖານະການເປັນພົນລະເມືອງ, ການເຂົ້າເມືອງຂອງຜູ້ໃດຜູ້ໜຶ່ງປຽນແປງ ຫຼືຜູ້ໃດຜູ້ໜຶ່ງໄດ້ຮັບໜັງສື, ແບບຟອມ ຫຼືບັດໃໝ່ຈາກ ສຳນັກງານພົນລະເມືອງ ແລະການເຂົ້າເມືອງຂອງສະຫະລັດ (USCIS) (ເມື່ອກ່ອນແມ່ນ INS).
- ທ່ານມີການປຽນແປງຢູ່ໃນຄ່າໃຊ້ຈ່າຍການດູແລຜູ້ຂຶ້ນກັບຂອງທ່ານ.
- ສະມາຊິກຜູ້ໃດໜຶ່ງທີ່ເປັນຜູ້ພິການ ຫຼືມີອາຍຸ 60 ປີ ຫຼືແກ່ກວ່ານັ້ນມີການປຽນແປງຢູ່ໃນ ຫຼືຄ່າໃຊ້ຈ່ າຍທາງການແພດໃໝ່. ຖ້າໄດ້ຮັບການກວດສອບແລ້ວ, ການຈັດແບ່ງໃຫ້ຂອງທ່ານສາມາດຖືກຈັດຕົວເລກຄືນໃໝ່ໄດ້.
- ສະມາຊິກຜູ້ໃດໜຶ່ງເລີ່ມຈ່ າຍຄ່າລ້ຽງດູເດັກນ້ອຍຕາມສານສັ່ງໃຫ້ກັບເດັກນ້ອຍທີ່ບໍ່ໄດ້ ອາໄສຢູ່ໃນບ້ານ.

ທ່ານອາດຈະລາຍງານການປຽນແປງຕ່າງໆໄດ້:

- ໂດຍທາງໄປສະນີ, ໂທລະສັບ, ຫຼືລາຍງານໃຫ້ກັບຫ້ອງການ CalFresh ຂອງຄາວຕີ້ດ້ວຍຕົນເອງ; ຫຼື
- ໂດຍການມອບແບບຟອມລາຍງານການປຽນແປງຄອບຄົວ CF 377.5 CR CalFresh ໄດ້.

ເງິນຊ່ວຍເຫຼືອ CALFRESH ໃນໄລຍະປຽນແປງ

ໂຄງການ CalFresh ໃນໄລຍະປຽນແປງຂອງລັດຄາລິຟໍເນຍໃຫ້ເງິນຊ່ວຍເຫຼືອ CalFresh ເປັນເວລາຫ້າເດືອນແກ່ຄອບຄົວທີ່ອອກໄປຈາກ CalWORKs. ຖ້າຄອບຄົວຂອງທ່ານເລີ່ມໄດ້ຮັບເງິນຊ່ວຍເຫຼືອ CalFresh ໃນໄລຍະປຽນແປງ, ທ່ານບໍ່ຕ້ອງລາຍງານ ໃນຂະນະທີ່ໄດ້ຮັບເງິນຊ່ວຍເຫຼືອເຫຼົ່ານີ້.

ຖ້າທ່ານກຳລັງໄດ້ຮັບເງິນຊ່ວຍເຫຼືອ CalFresh ໃນໄລຍະປຽນແປງ, ທ່ານອາດຈະສະໝັກຂໍຄືນໃໝ່ ເພື່ອເບິ່ງວ່າທ່ານສາມາດໄດ້ຮັບເງິນຊ່ວຍເຫຼືອເພີ່ມຕື່ມບໍ່. ຖ້າທ່ານສະໝັກຂໍຄືນໃໝ່ ແລະໄດ້ຮັບການອະນຸມັດຕໍ່ເງິນຊ່ວຍເຫຼືອ CalFresh ປົກກະຕິ, ຈານັ້ນ ຈະນຳໃຊ້ກົດລະບຽບການລາຍງານປົກກະຕິ.